ສົ່ງ: ທ່ານ ຫົວໜ້າສຳນັກງານ ຄຄຊ "ເພື່ອຊາບ".

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----===000===-----

ທະນາຄານແຫ່ງ ສປປ ລາວ

ເລກທີ 22 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 12 NOV 2014

# ບົດສະຫຼຸບການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ ປະຈຳເດືອນ 10/2014 ແລະ ທິດທາງແຜນການໃນຕໍ່ໜ້າ

ສຳນັກງານ ຄຄຊ
ສົ່ງ ເລກທີ 1032
ວັນທີ 12.11.14
ໂທລະສັບ 021 217770

## ພາກທີ I

## ການເຄື່ອນໄຫວວຽກງານທະນາຄານໃນໄລຍະຜ່ານມາ

### I. ວຽກງານການເມືອງແນວຄິດ

ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດໃຫ້ສະມາຊິກພັກ-ພະນັກງານຢ່າງເປັນປົກກະຕິ ດ້ວຍຫຼາຍຮູບການທີ່ເໝາະສົມ; ປະຕິບັດລະບອບການສ່ອງແສງລາຍງານ ແລະ ການດຳເນີນຊີວິດການເມືອງພາຍໃນພັກ, ກົມກອງ ແລະ ອົງການຈັດຕັ້ງມະຫາຊົນ ປະຈຳເດືອນ ເພື່ອກວດກາຕີລາຄາຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ. ໃນເດືອນຜ່ານມາໄດ້ມີບາງເຫດການພົ້ນເດັ່ນຄື: ❶ ສຳເລັດການຈັດກອງປະຊຸມສ່ອງແສງວຽກງານສາຍພັກ ແລະ ວຽກງານສາຍລັດ ປະຈຳເດືອນ 9/2014; ❷ຄົ້ນຄວ້າສ້າງລະບຽບການວ່າດ້ວຍການຄັດເລືອກພະນັກງານໃໝ່ຢູ່ ທຫລ; ❸ຮັບແຈ້ງຊັບສິນ ແລະ ລາຍຮັບພະນັກງານ ທຫລ ແລະ ❹ຄົ້ນຄວ້າປັບປຸງພາລະບົດບາດຂອງໜ່ວຍງານຂໍ້ມູນຕ້ານການຟອກເງິນ, ກົມບັນຊີ-ການເງິນ, ກົມນະໂຍບາຍເງິນຕາ ແລະ ກົມຈັດຕັ້ງ ແລະ ພະນັກງານ. ໄດ້ປັບປຸງການຈັດຕັ້ງຂັ້ນພະແນກ ແລະ ສາຂາຂອງ ທຄຕລ. ຜ່ານການຈັດຕັ້ງປະຕິບັດຄືດັ່ງກ່າວ ເຮັດໃຫ້ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານ ມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ ແລະ ເຂັ້ມງວດ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ວຽກງານທີ່ລັດຖະບານມອບໝາຍໃຫ້

- ສືບຕໍ່ປັບປຸງຮ່າງກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຮ່ວມກັບກົມກຳມະທິການກ່ຽວຂ້ອງກັບສະພາແຫ່ງຊາດ;
- ສຳເລັດບົດສະຫຼຸບການຈັດຕັ້ງປະຕິບັດແຜນເງິນຕາ ຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VII (2011-2015);
- ໄດ້ນຳເອົາແຜນຍຸດທະສາດການພັດທະນາຕະຫຼາດທຶນ ຂອງ ສປປ ລາວ ແຕ່ປີ 2016-2025 ຜ່ານກອງປະຊຸມລັດຖະບານ ໃນວັນທີ 23/10/2014 ຊຶ່ງກອງປະຊຸມໄດ້ຮັບຮອງເອົາດ້ານຫຼັກການ.

### III. ວຽກງານພົ້ນເດັ່ນ

- ຈັດພິທີສະເຫຼີມສະຫຼອງຕ້ອນຮັບວັນສ້າງຕັ້ງທະນາຄານແຫ່ງ ສປປ ລາວ ຄົບຮອບ 46 ປີ 7/10/1968-7/10/2014 ແລະ ຈັດພິທີສະເຫຼີມສະຫຼອງວັນຄູແຫ່ງຊາດ 7 ຕຸລາ ຢູ່ສະຖາບັນການທະນາຄານ;
- ວຽກງານຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ: ❶ສຳເລັດການອອກໃບອະນຸຍາດສ້າງຕັ້ງຖາວອນໃຫ້ແກ່ທະນາຄານ ກະສິກອນໄທ ຈຳກັດ; ອອກໃບອະນຸຍາດສ້າງຕັ້ງຊົ່ວຄາວໃຫ້ແກ່ທະນາຄານແຫ່ງ ປະເທດຈີນ ຈຳກັດ ສາຂານະຄອນຫຼວງ; ❷ອອກໃບອະນຸຍາດສ້າງຕັ້ງຊົ່ວຄາວໃຫ້ແກ່ບໍລິສັດລາວແຜ່ນດິນຄຳ ຄໍ້າປະກັນການລົງທຶນ ແລະ

ຈັດຫາແຫຼ່ງທຶນ ຈຳກັດ; ❸ສຳເລັດການອອກໃບອະນຸຍາດສ້າງຕັ້ງສາຂາສອນມອນ ແລະ ສາຂາບໍລິຄຳໄຊ ຂອງ ທະນາຄານເອຊີລີດາລາວ ຈຳກັດ ພ້ອມທັງອອກໃບອະນຸຍາດສ້າງຕັ້ງສຳນັກງານໃຫຍ່ສະບັບໃໝ່ປ່ຽນແທນສະບັບເກົ່າ; ❹ສຳເລັດການອອກໃບອະນຸຍາດສ້າງຕັ້ງຖາວອນໃຫ້ແກ່ ໂຮງຊວດຈຳ ສະບາຍດີ ເຊົ່າສິນເຊື່ອ ຈຳກັດ; ❺ອອກຂໍ້ຕົກລົງ ຍຸບເລີກດຳເນີນທຸລະກິດ ໂຮງຊວດຈຳ ຄູນທອງ;

- ສຳເລັດການສ້າງຕັ້ງຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (NCC);
- ສຳເລັດການອອກແຈ້ງການ ເຖິງທະນາຄານທຸລະກິດ ໃຫ້ສະຫຼຸບສັງລວມສະຖິຕິຝຶກອົບຮົມວຽກງານຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ປະຈຳສົກປີ 2013-2014;
- ສຳເລັດການເປີດຫຼັກສູດການຮຽນ-ການສອນ ສາຂາການເງິນຈຸລະພາກ ຢ່າງເປັນທາງການ ປະຈຳສົກສຶກສາ 2014-2015;
- ສຳເລັດການນຳສົ່ງສຳນວນທຸລະກຳທາງດ້ານການເງິນທີ່ສົງໄສວ່າເປັນການຟອກເງິນ ໃຫ້ແກ່ເຈົ້າໜ້າທີ່ສືບສວນ-ສອບສວນ 01 ສະບັບ. ພ້ອມນີ້, ໃນເດືອນ 10/2014 ໄດ້ຮັບສຳນວນທຸລະກຳທາງດ້ານການເງິນທີ່ສົງໄສວ່າເປັນການຟອກເງິນຈາກທະນາຄານທຸລະກິດຈຳນວນ 02 ສະບັບ ຊຶ່ງຮອດປັດຈຸບັນລວມທັງໝົດມີ 118 ສະບັບ;
- ສຳເລັດການຈັດກອງປະຊຸມຕ່າງໆດັ່ງນີ້: ❶ ກອງປະຊຸມປຶກສາຫາລື ການກຳນົດຜູ້ຄຸ້ມຄອງວຽກງານ AML/CFT ສຳລັບຂະແໜງການເງິນ; ❷ ກອງປະຊຸມຄົ້ນຄວ້າ ແລະ ຮຽບຮຽງຄືນຂອງຮ່າງກົດໝາຍ AML ຮ່ວມກັບສະພາແຫ່ງຊາດ; ❸ ກອງປະຊຸມປຶກສາຫາລືກ່ຽວກັບຮ່າງດຳລັດຈັດຕັ້ງປະຕິບັດຍັດຕິ 1267 ແລະ 1373 ຂອງສະພາຄວາມໝັ້ນຄົງສະຫະປະຊາຊາດ; ❹ ກອງປະຊຸມສະພາບໍລິຫານ ທຄຕລ ເພື່ອຮັບຮອງເອົາຜົນການກວດສອບຖານະການເງິນປະຈຳໄຕມາດ 2/2014 ແລະ ເງິນປັນຜົນ 6 ເດືອນຕົ້ນປີ 2014 ໃຫ້ແກ່ຂາຮຸ້ນ; ❺ຈັດສຳມະນາຮ່ວມກັບທະນາຄານແຫ່ງລັດ ຫວຽດນາມ ໃນຫົວຂໍ້ "ການພັດທະນາເຄື່ອງມືນະໂຍບາຍເງິນຕາ".

## IV. ວຽກງານວິຊາສະເພາະ

### 1. ການຮັກສາສະຖຽນລະພາບເງິນຕາແຫ່ງຊາດ

### 1.1. ສະພາບເສດຖະກິດເງິນຕາສາກົນ

ຫຼາຍປະເທດຍັງສືບຕໍ່ປະຕິບັດນະໂຍບາຍຜ່ອນຄາຍທາງການເງິນ ເພື່ອເຮັດໃຫ້ອັດຕາການຂະຫຍາຍຕົວຂອງ GDP ເພີ່ມຂຶ້ນ, ອັດຕາການວ່າງງານຫຼຸດລົງ ແລະ ອັດຕາເງິນເຟີ້ຢູ່ໃນລະດັບຄວບຄຸມໄດ້ (ຕໍ່າກ່ວາ 5%) ໂດຍການຮັກສາອັດຕາດອກເບ້ຍພື້ນຖານຢູ່ໃນລະດັບຕໍ່າ ແລະ ເພີ່ມປະລິມານເງິນເຂົ້າສູ່ຂອດຈໍລະຈອນ (QE) ເປັນຕົ້ນ ສ.ອາເມລິກາ ໄດ້ຮັກສາອັດຕາດອກເບ້ຍພື້ນຖານຢູ່ໃນລະດັບ 0%-0,25% ແລະ ເພີ່ມປະລິມານເງິນເຂົ້າສູ່ຂອດຈໍລະຈອນ 15 ຕື້ໂດລາ/ເດືອນ; ກຸ່ມປະເທດນຳໃຊ້ເງິນເອີໂຣ (EA) ໄດ້ຮັກສາອັດຕາດອກເບ້ຍພື້ນຖານຢູ່ໃນລະດັບ 0,05% ແຕ່ບໍ່ໄດ້ແຈ້ງການເພີ່ມປະລິມານເງິນເຂົ້າສູ່ຂອດຈໍລະຈອນ; ອັງກິດ ໄດ້ຮັກສາອັດຕາດອກເບ້ຍພື້ນຖານຢູ່ໃນລະດັບ 0,5% ແລະ ເພີ່ມປະລິມານເງິນເຂົ້າສູ່ຂອດຈໍລະຈອນ 375 ຕື້ປອນສະເຕີລິງ/ເດືອນ; ຍີ່ປຸ່ນ ໄດ້ຮັກສາອັດຕາດອກເບ້ຍພື້ນຖານຢູ່ໃນລະດັບ 0,1% ແຕ່ບໍ່ໄດ້ແຈ້ງການເພີ່ມປະລິມານເງິນເຂົ້າສູ່ຂອດຈໍລະຈອນ. ຈາກການປະຕິບັດມາດຕະການດັ່ງກ່າວ ສະເພາະ ສ.ອາເມລິກາ ອັດຕາວ່າງງານໃນເດືອນກັນຍາ 2014 ຫຼຸດລົງ ຢູ່ໃນລະດັບ 5,9% ຈາກ 6,1% ໃນເດືອນຜ່ານມາ ຊຶ່ງເປັນອັດຕາຕໍ່າສຸດເລີ່ມແຕ່ປີ 2008 ເປັນຕົ້ນມາ.

ແຕ່ຫຼາຍປະເທດໃນໂລກ ລະດັບການຂະຫຍາຍຕົວທາງເສດຖະກິດຍັງຢູ່ໃນລະດັບຕໍ່າ ແລະ ອັດຕາການວ່າງງານຍັງສູງ ເປັນຕົ້ນ ໃນໄຕມາດ 2/2014 ອັດຕາການຂະຫຍາຍຕົວທາງເສດຖະກິດຂອງກຸ່ມປະເທດນຳໃຊ້ເງິນເອີໂຣ (EA) ທຽບໄລຍະດຽວກັນຂອງປີຜ່ານມາ ຢູ່ໃນລະດັບ 0,7% ຈາກ 1,0% ໃນໄຕມາດ 1/2014; ອັງກິດ 3,1% ຈາກ 3,0%; ຍີ່ປຸ່ນ -7,1% ຈາກ 6,7%; ອິນເດຍ 5,7% ຈາກ 4,6%; ສ.ເກົາຫຼີ 3,5% ຈາກ 3,9%; ສປ.ຈີນ 7,5%ຈາກ 7,4%; ສະເພາະ ເຢຍລະມັນ 1,3% ຈາກ 2,2%; ຝຣັ່ງ 0,1% ຈາກ 0,8% ແລະອີຕາລີ -0,2% ຈາກ -0,3%. ຈາກຕົວເລກດັ່ງກ່າວ ເຮັດໃຫ້ກອງທຶນການເງິນສາກົນ (IMF) ປັບຫຼຸດການຄາດຄະເນເສດຖະກິດໂລກໃນປີ 2014 ຈາກ 3,4% ມາເປັນ 3,3% ແລະ ປີ 2015 ຈາກ 4,0% ມາເປັນ 3,8%, ສຳລັບກຸ່ມປະເທດທີ່ພັດທະນາແລ້ວ ປັບຫຼຸດ 1,8% ໃນປີ 2014 ແລະ 2,3% ໃນປີ 2015 ຕາມລຳດັບ.

## 1.2. ການຮັກສາສະຖຽນລະພາບເງິນຕາພາຍໃນ

ໂດຍອີງໃສ່ສະພາບເສດຖະກິດເງິນຕາສາກົນ, ທະນາຄານແຫ່ງ ສປປ ລາວ ໄດ້ກຳນົດນະໂຍບາຍເງິນຕາຂອງຕົນດ້ວຍຄວາມລະມັດລະວັງ ເພື່ອຮັກສາສະຖຽນລະພາບເສດຖະກິດມະຫາພາກໃຫ້ໄດ້ຕາມຄາດໝາຍທີ່ກຳນົດໄວ້. ໂດຍສາມາດຄວບຄຸມອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນ ໃຫ້ຢູ່ໃນລະດັບທີ່ສາມາດຄວບຄຸມໄດ້ດັ່ງລາຍລະອຽດ ລຸ່ມນີ້:

- ຖານເງິນຕາປະຈຳເດືອນ 10/2014 (ຕົວເລກເບື້ອງຕົ້ນ) ເພີ່ມຂຶ້ນ 14,01% ເມື່ອທຽບໃສ່ເດືອນຜ່ານມາ ແລະ ປະລິມານເງິນ $M_2$ ເພີ່ມຂຶ້ນ 1,90% ເມື່ອທຽບໃສ່ເດືອນຜ່ານມາ;
- ສະພາບອັດຕາແລກປ່ຽນສະເລ່ຍໃນເດືອນ 10/2014 ທຽບໃສ່ເດືອນ 09/2014 ເຫັນວ່າ: ເງິນກີບທຽບໃສ່ເງິນໂດລາອ່ອນຄ່າ 0,02% ແຕ່ເງິນກີບທຽບໃສ່ເງິນບາດແຂງຄ່າ 1,06%.

**(ລາຍລະອຽດໃນ ຕາຕະລາງຄັດຕິດທີ 1)**

ສະພາບການຊື້-ຂາຍເງິນຕາຕ່າງປະເທດ ໃນເດືອນ 10/2014 ໂດຍລວມແມ່ນປະລິມານຄວາມຕ້ອງການຫລາຍກວ່າການສະໜອງ ເພາະ ທທກ ໄດ້ຂາຍສຸດທິ 45,97 ລ້ານໂດລາທຽບເທົ່າ (ໃນນີ້: ຊື້ໂດລາສຸດທິ 9,91 ລ້ານໂດລາ ແຕ່ຂາຍເງິນບາດສຸດທິ 1,810,40 ລ້ານບາດ). ສະນັ້ນ, ທຫລ ຈຶ່ງໄດ້ດັດສົມຕະຫລາດເງິນຕາຕ່າງປະເທດດ້ວຍການຂາຍສຸດທິ 56,65 ລ້ານໂດລາທຽບເທົ່າ (ໃນນີ້: ຂາຍໂດລາສຸດທິ 9,11 ລ້ານໂດລາ ແລະ ຂາຍເງິນບາດສຸດທິ 1.540,50 ລ້ານບາດ).

**(ລາຍລະອຽດໃນ ຕາຕະລາງຄັດຕິດທີ 2)**

- ອັດຕາເງິນເຟີ້ປະຈຳເດືອນ 10/2014 ຢູ່ໃນລະດັບ 33,19% ເພີ່ມຂຶ້ນ 0,14% ເມື່ອທຽບໃສ່ເດືອນ 09/2014.

## 2. ການລະດົມເງິນຝາກ, ການປ່ອຍສິນເຊື່ອ ແລະ ແກ້ໄຂໜີ້ບໍ່ເກີດດອກອອກຜົນຂອງທະນາຄານທຸລະກິດ

ການລະດົມເງິນຝາກຮອດເດືອນ 10/2014 (ຕົວເລກເບື້ອງຕົ້ນ) ທະນາຄານທຸລະກິດມີຍອດເງິນຝາກທັງໝົດ 42.094,65 ຕື້ກີບ, ເມື່ອທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 2,34%. ໃນນັ້ນ, ເງິນຝາກເປັນເງິນກີບ ເພີ່ມຂຶ້ນ 4,48% ກວມເອົາ 52,37% ຂອງຍອດເງິນຝາກທັງໝົດ ແລະ ເງິນຝາກເປັນເງິນຕາຕ່າງປະເທດເພີ່ມຂຶ້ນ 1,14% ກວມເອົາ 48,63% ຂອງເງິນຝາກທັງໝົດ.

ການປ່ອຍສິນເຊື່ອຂອງທະນາຄານທຸລະກິດ 10/2014 (ບໍ່ລວມທະນາຄານນະໂຍບາຍ) ຍອດເຫຼືອສິນເຊື່ອທັງໝົດ 39.826,56 ຕື້ກີບ ເພີ່ມຂຶ້ນ 1,19% ເມື່ອທຽບໃສ່ເດືອນຜ່ານມາ. ສິນເຊື່ອເປັນເງິນຕາຕ່າງປະເທດກວມເອົາ 48,59% ຂອງສິນເຊື່ອທັງໝົດ.

ໃນເດືອນ 10/2014 ທະນາຄານນະໂຍບາຍປ່ອຍສິນເຊື່ອໄດ້ 106,66 ຕື້ກີບ ເພີ່ມຂຶ້ນ 24,32% ເມື່ອທຽບໃສ່ເດືອນຜ່ານມາ. ໃນນີ້: ສິນເຊື່ອ 68 ເມືອງທຸກຍາກ ມີຈຳນວນ 82,92 ຕື້ກີບ, ສິນເຊື່ອ 64 ຈຸດສຸມ ມີຈຳນວນ 5,9 ຕື້ກີບ, ສິນເຊື່ອ 3 ສ້າງ ມີຈຳນວນ 17,84 ຕື້ກີບ ຫຼຸດລົງ 10,66% ເມື່ອທຽບໃສ່ເດືອນຜ່ານມາ ແລະ ເກັບໜີ້ໄດ້ 29,81 ຕື້ກີບມີ. ສິນເຊື່ອທັງໝົດທີ່ປ່ອຍໄປສ່ວນໃຫຍ່ແມ່ນໄດ້ສຸມໃສ່ຂະແໜງ ການກະສິກຳ-ປ່າໄມ້, ການຄ້າ ແລະ ປະກອບວັດຖຸເຕັກນິກ.

ຍອດເຫຼືອໜີ້ຕ້ອງຮັບທວງຍາກ (NPL) ຂອງທະນາຄານທຸລະກິດທີ່ວລະບົບ (ບໍ່ລວມທະນາຄານນະໂຍບາຍ) ຮອດເດືອນ 9/2014 ມີ ຈຳນວນ 2.356,36 ຕື້ກີບ ຫຼຸດລົງ 6,71% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 4,71% ຂອງຍອດເຫຼືອສິນເຊື່ອທັງໝົດ. ສາເຫດທີ່ໜີ້ບໍ່ເກີດດອກອອກຜົນຫຼຸດລົງເມື່ອທຽບໃສ່ເດືອນຜ່ານມາ ຍ້ອນທະນາຄານພັດທະນາລາວເກັບກູ້ໜີ້ສິນຄືນໄດ້ ຈຳນວນ 239,69 ຕື້ກີບ.

## 3. ການເຄື່ອນໄຫວຊຳລະສະສາງ ແລະການຊື້-ຂາຍພັນທະບັດ

### 3.1. ການເຄື່ອນໄຫວຊຳລະສະສາງ

ການຊຳລະສະສາງດ້ວຍແຊັກຜ່ານສູນຊຳລະສະສາງໃນເດືອນນີ້ມີຈຳນວນ 3.323 ສະບັບ ຫຼຸດລົງ 2,32% ເປັນເງິນຈຳນວນ 2.606,31 ຕື້ກີບ ເພີ່ມຂຶ້ນ 18,90% ເມື່ອທຽບໃສ່ເດືອນຜ່ານມາ. ການໂອນເງິນທາງໂທລະສານແບບມີມູນຄ່າສູງໃນເດືອນນີ້ມີຈຳນວນ 39 ຄັ້ງ ມີມູນຄ່າການໂອນ 187,55 ຕື້ກີບ ເພີ່ມຂຶ້ນ 110,61% ເມື່ອທຽບໃສ່ເດືອນຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງມູນຄ່າສູງ (RTGS) ແຕ່ວັນທີ 29/09-27/10/2014 ມີການເຄື່ອນໄຫວຈຳນວນ 3.767 ຄັ້ງ ມີມູນຄ່າ 1.030,078 ຕື້ກີບ ເພີ່ມຂຶ້ນ 6,12% ເມື່ອທຽບໃສ່ເດືອນຜ່ານມາ. ທະນາຄານທຸລະກິດທີ່ເຮັດທຸລະກຳສູງສຸດ ຄື: ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຈຳນວນ 1.281 ຄັ້ງ.

### 4.2 ການຊື້-ຂາຍພັນທະບັດ

ໃນເດືອນ 10/2014 ໄດ້ຈຳໜ່າຍພັນທະບັດກະຊວງການເງິນ ບ້ວງ 1.000 ຕື້ກີບ (ຂາຍຜ່ານ ທຫລ) ໃຫ້ທະນາຄານທຸລະກິດ ຈຳນວນ 440 ຕື້ກີບ, ໄຖ່ຖອນພັນທະບັດບ້ວງລະດົມທຶນຂາຍໂດຍກົງໃຫ້ທະນາຄານທຸລະກິດ ຈຳນວນ 400 ຕື້ກີບ ແລະ ໄດ້ໂອນເງິນຄືນໃຫ້ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ເພື່ອຮັກສາສະພາບຄ່ອງຂອງ ທຄຕລ ເນື່ອງຈາກກະຊວງການເງິນບໍ່ມີການກຽມຄວາມພ້ອມຊຳລະໜີ້ຂອງຕົນ ຈຳນວນທັງໝົດ 359 ຕື້ກີບ (ໜີ້ລູກຄ້າເງິນກູ້ຂອງ ທຄຕລ ເຊິ່ງກາຍເປັນ NPL ແລະ ກຳລັງຈະກາຍເປັນ NPL) ຕາມທີ່ສອງຝ່າຍຕົກລົງກັນໃນເບື້ອງຕົ້ນ. ປັດຈຸບັນມີພັນທະບັດທີ່ຍັງບໍ່ທັນຄົບກຳນົດໄຖ່ຖອນທັງໝົດ 4 ບ້ວງ ມີມູນຄ່າ 5.861,39 ຕື້ກີບ ແລະ 70 ລ້ານໂດລາ.

ສຳລັບພັນທະບັດທະນາຄານແຫ່ງ ສປປ ລາວ ໃນເດືອນ 10/2014 ມີການໄຖ່ຖອນຕົ້ນທຶນພັນທະບັດ ຈຳນວນ 13 ຕື້ກີບ; ມີການຊຳລະດອກເບ້ຍພັນທະບັດ ຈຳນວນ 845 ລ້ານກີບ. ນັບແຕ່ປີ 2008 ຮອດເດືອນ 9/2014 ທຫລ ມີຍອດລວມການຈຳໜ່າຍພັນທະບັດທັງໝົດ ຈຳນວນ 10.381,06 ຕື້ກີບ ແລະ 696,68 ລ້ານໂດລາ; ໂດຍມີການໄຖ່ຖອນຄືນແລ້ວ ຈຳນວນ 9.915,66 ຕື້ກີບ ແລະ 534,48 ລ້ານໂດລາ ແລະ ຈຳນວນທີ່ຍັງບໍ່ທັນມີການໄຖ່ຖອນ 40 ຕື້ກີບ ແລະ 162,20 ລ້ານໂດລາ.

### 4. ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດສະນີຕະຫຼາດຫຼັກຊັບລາວໃນເດືອນນີ້ ປິດຢູ່ທີ່ 1.431,58 ຈຸດ ເພີ່ມຂຶ້ນ 0,27% ເມື່ອທຽບໃສ່ເດືອນຜ່ານມາ. ໃນເດືອນນີ້ມີປະລິມານຊື້-ຂາຍຮຸ້ນທັງໝົດ 628.443 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 4,54 ຕື້ກີບ ເພີ່ມຂຶ້ນ 13,60% ທຽບໃສ່ເດືອນຜ່ານມາ, ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 67,16% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 7.790 ກີບ/ຮຸ້ນ ຫຼຸດລົງ 40 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນຜ່ານມາ ມີປະລິມານຊື້-ຂາຍທັງໝົດ 214.895 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,67 ຕື້ກີບ ເພີ່ມຂຶ້ນ 86,95% ເມື່ອທຽບໃສ່ເດືອນຜ່ານມາ ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 52,76% ສັດສ່ວນການຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 9,40%.

ຮຸ້ນຂອງບໍລິສັດຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 6.953 ກີບ/ຮຸ້ນ ຫຼຸດລົງ 82 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນຜ່ານມາ ມີປະລິມານການຊື້-ຂາຍຮຸ້ນທັງໝົດ 413.238 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,87 ຕື້ກີບ ຫຼຸດລົງ 7,48% ເມື່ອທຽບໃສ່ເດືອນຜ່ານມາ ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 86,04% ສັດສ່ວນການຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 14,24%.

ຮຸ້ນຂອງບໍລິສັດລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 8.200 ກີບ/ຮຸ້ນ ຫຼຸດລົງ 80 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນຜ່ານມາ ມີປະລິມານຊື້-ຂາຍທັງໝົດ 310 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,54 ລ້ານກີບ ຫຼຸດລົງ 38,60% ເມື່ອທຽບໃສ່ເດືອນຜ່ານມາ ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 66,67% ສັດສ່ວນການຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,71%.

## V. ດ້ານອ່ອນແລະຂໍ້ຄົງຄ້າງ

- ການເຜີຍແຜ່ເອກະສານສຳຄັນບາງຄັ້ງ ຍັງບໍ່ທັນຕາມກຳນົດເວລາ;
- ການສ້າງ ແລະ ປັບປຸງນິຕິກຳບາງສະບັບ ຍັງບໍ່ທັນສຳເລັດຕາມກຳນົດເວລາ;
- ພະນັກງານຈຳນວນໜຶ່ງຍັງຂາດສະຕິຕໍ່ການຈັດຕັ້ງລະບຽບເປັນບາງຄັ້ງຄາວ ເປັນຕົ້ນແມ່ນການປະຕິບັດລະບອບການມາການ;
- ສະມາຊິກ 3 ອົງການຈັດຕັ້ງ ມະຫາຊົນ ຈຳນວນໜຶ່ງຍັງຂາດຄວາມເປັນເຈົ້າການ ໃນການເຂົ້າຮ່ວມຂະບວນການຕ່າງໆ ທີ່ກົມ ຫຼື ທຫລ ຈັດຂຶ້ນ.

ເພື່ອແກ້ໄຂບັນດາດ້ານອ່ອນ ແລະ ຂໍ້ຄົງຄ້າງຂ້າງເທິງນັ້ນບັນດາກົມ ແລະ ທຽບເທົ່າກົມພາຍໃນ ທຫລ ໄດ້ມີການຈັດຕັ້ງການເຜີຍແຜ່ບັນດາເອກະສານສຳຄັນຕ່າງໆ ເປັນແຕ່ລະໄລຍະ, ຈັດຕັ້ງການນຳພາການເມືອງ-ແນວຄິດແກ່ພະນັກງານທຸກຂັ້ນ, ເອົາໃຈໃສ່ຈັດຕັ້ງປະຕິບັດໜ້າທີ່ດ້ວຍຄວາມຮັບຜິດຊອບ, ບໍ່ສວຍໃຊ້ສິດອຳນາດຂອງຕົນ, ຮູ້ເສຍສະຫຼະຜົນປະໂຫຍດສ່ວນຕົວເພື່ອສ່ວນລວມ ເປັນຕົ້ນແມ່ນດ້ານສະຕິປັນຍາ, ເຫື່ອແຮງ ແລະ ເວລາ ເພື່ອໃຫ້ວຽກງານທີ່ໄດ້ຮັບມອບໝາຍສຳເລັດຕາມຄາດໝາຍ. ເອົາໃຈໃສ່ປັບປຸງບັນດານິຕິກຳໃຫ້ສົມບູນຂຶ້ນກວ່າເກົ່າ, ລະດົມສະມາຊິກ 3 ອົງການຈັດຕັ້ງມະຫາຊົນ ເຂົ້າຮ່ວມຂະບວນການຕ່າງໆ ຢ່າງເປັນປະຈຳ.

## <u>ພາກທີII</u>

## <u>ທິດທາງແຜນການໃນຕໍ່ໜ້າ</u>

### I. <u>ວຽກງານການເມືອງແນວຄິດ</u>

ສືບຕໍ່ນຳພາການເມືອງ-ແນວຄິດຂອງພະນັກງານໃຫ້ມີຄວາມສະຫງົບ ແລະ ເຊື່ອມຊຶມບັນດາແນວທາງຂອງພັກ-ລັດ, ຈັດຕັ້ງເຜີຍແຜ່ເອກະສານຕ່າງໆ ທີ່ຂັ້ນເທິງໄດ້ມອບໝາຍໃຫ້ພະນັກງານໄດ້ເຊື່ອມຊຶມ ແລະ ຈັດຕັ້ງຜັນຂະຫຍາຍເຂົ້າໃນວຽກງານຂອງຕົນ ຊຸກຍູ້ສົ່ງເສີມໃຫ້ພະນັກງານເພີ່ມຄວາມເປັນເຈົ້າການໃນການປະຕິບັດໜ້າທີ່ວຽກງານຂອງຕົນ ດ້ວຍຄວາມຮັບຜິດຊອບສູງ, ຍົກສູງຄວາມສາມັກຄີພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. <u>ວຽກງານວິຊາສະເພາະ</u>

#### 1. <u>ແຜນປະຕິບັດວຽກງານຈຸດສຸມໃນຕໍ່ໜ້າ</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນດັ່ງທີ່ໄດ້ກຳນົດໄວ້ໃນແຜນງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ຄົ້ນຄວ້າສ້າງແບບຈຳລອງເສດຖະກິດມະຫາພາກ ແລະ ອັດຕາແລກປ່ຽນ; ຊຸກຍູ້ການເຄື່ອນໄຫວຕະຫຼາດລະຫວ່າງທະນາຄານ; ສືບຕໍ່ຕິດຕາມສະພາບອັດຕາເງິນເຟີ້ ແລະ ຄວບຄຸມປັດໃຈຕ່າງໆ ທີ່ຈະກະທົບໃຫ້ເກີດເງິນເຟີ້; ເອົາໃຈໃສ່ບໍລິຫານຄັງສຳຮອງເງິນຕາຕ່າງປະເທດໃຫ້ມີປະສິດທິພາບ.
- ສືບຕໍ່ຄຸ້ມຄອງເງິນຕາຕ່າງປະເທດ, ສົ່ງເສີມການນຳໃຊ້ເງິນກີບ ແລະ ການຊຳລະໂດຍບໍ່ໃຊ້ເງິນສົດໂດຍໃນເດືອນຕໍ່ໄປຈະສືບຕໍ່ລົງກວດກາຕິດຕາມສະພາບການຕິດລາຄາສິນຄ້າ ແລະ ບໍລິການຂອງບັນດາຕະຫຼາດ, ຫ້າງຮ້ານພາຍໃນນະຄອນຫຼວງວຽງຈັນ;
- ຊຸກຍູ້ບັນດາທະນາຄານທຸລະກິດເພີ່ມທະວີການລະດົມເງິນຝາກດ້ວຍຫຼາຍຮູບຫຼາຍສີ ໂດຍສະເພາະເງິນຝາກໄລຍະຍາວ ດ້ວຍການອອກພັນທະບັດ, ໃບຢັ້ງຢືນເງິນຝາກ, ສະຫຼາກປະຢັດ ແລະ ຮູບການອື່ນໆ ທີ່ເໝາະສົມສອດຄ່ອງກັບຄວາມຕ້ອງການຕົວຈິງຂອງສັງຄົມ ໄປຄຽງຄູ່ກັບການປັບປຸງການບໍລິການຂອງຕົນໃຫ້ມີຄວາມສະດວກວ່ອງໄວ ແລະ ທັນໄປສູ່ຄວາມເປັນທັນສະໄໝເທື່ອລະກ້າວ. ຊຸກຍູ້ການປັບອັດຕາດອກເບ້ຍໃຫ້ສອດຄ່ອງກັບສະພາບການພາຍໃນ ແລະ ສາກົນ. ພ້ອມທັງສືບຕໍ່ຄົ້ນຄວ້າປັບປຸງນະໂຍບາຍ, ກົນໄກການຄຸ້ມຄອງສິນເຊື່ອຂອງລະບົບທະນາຄານ ແລະ ສະຖາບັນການເງິນ ເພື່ອສ້າງເງື່ອນໄຂໃຫ້ນຳໃຊ້ທຶນຮອນໄດ້ຢ່າງເຕັມສ່ວນ; ເພີ່ມທະວີການຕິດຕາມກວດກາການເຄື່ອນໄຫວສິນເຊື່ອ ຂອງສະຖາບັນການເງິນອື່ນໆລວມທັງສະຖາບັນການເງິນຈຸລະພາກ, ສະຫະກອນສິນເຊື່ອ ໃຫ້ຖືກຕ້ອງຕາມລະບຽບການ; ຕິດຕາມການນຳໃຊ້ສິນເຊື່ອຢ່າງໃກ້ຊິດ ແລະ ການປັບປຸງໂຄງສ້າງໜີ້ໃຫ້ແທດເໝາະ ເພື່ອຮັບປະກັນບໍ່ໃຫ້ເກີດໜີ້ບໍ່ເກີດດອກອອກຜົນເກີນ 3%;
- ສືບຕໍ່ຄົ້ນຄວ້າ ແລະ ປັບປຸງບັນດານິຕິກຳທີ່ຕິດພັນກັບວຽກງານວິຊາສະເພາະຕ່າງໆໄດ້ແກ່: **(1)** ປັບປຸງຮ່າງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ ຕາມມະຕິຕົກລົງຂອງກອງປະຊຸມລັດຖະບານ ເພື່ອສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດພິຈາລະນາເອົາຮ່າງກົດໝາຍດັ່ງກ່າວ ເຂົ້າໃນກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ ໃນເດືອນ 12/2014; **(2)** ປັບປຸງຮ່າງດຳລັດວ່າດ້ວຍແຊັກ ຕາມຄຳເຫັນຂອງກອງປະຊຸມລັດຖະບານ ຊຶ່ງຢູ່ໃນຂັ້ນຕອນສະເໜີນາຍົກລັດຖະມົນຕີເຊັນຮັບຮອງ; **(3)** ຮ່າງດຳລັດວ່າດ້ວຍໂຮງຊວດຈຳ ຍັງຕິດຕາມນຳກະຊວງຍຸຕິທຳ; **(4)** ຮ່າງດຳລັດວ່າດ້ວຍລະບົບຊຳລະສະສາງແຫ່ງຊາດ; **(5)** ສືບຕໍ່ປັບປຸງເນື້ອໃນຮ່າງດຳລັດວ່າດ້ວຍທຸລະກິດໃຫ້ເຊົ່າສິນເຊື່ອ; **(6)** ຕິດຕາມ ຮ່າງຂໍ້ຕົກລົງວ່າ

ດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ; ດຳລັດວ່າດ້ວຍຄະນະກຳມະການແຫ່ງຊາດ ເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ເອກະສານສະເໜີຂໍສ້າງຕັ້ງ ທຫລ ສາຂາຊຽງຂວາງ ທີ່ໄດ້ສົ່ງໃຫ້ກະຊວງພາຍໃນ; **(7)** ສືບຕໍ່ຜ່ານຮ່າງຂໍ້ຕົກລົງວ່າດ້ວຍການສ້າງຕັ້ງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດ; **(8)** ຮ່າງລະບຽບກ່ຽວກັບອັດຕາດອກເບ້ຍເງິນຝາກ-ເງິນກູ້ຂອງທະນາຄານທຸລະກິດ; **(9)** ຄົ້ນຄວ້າຮ່າງລະບຽບວ່າດ້ວຍການມອບຫຼັກຊັບຄ້ຳປະກັນຂອງລູກຄ້າ ເພື່ອຊຳລະໜີ້ເງິນກູ້ແກ່ທະນາຄານ; **(10)** ຄົ້ນຄວ້າຮ່າງຂໍ້ຕົກລົງວ່າດ້ວຍການປັບປຸງ ແລະ ເພີ່ມເຕີມເນື້ອໃນບາງມາດຕາ ແລະ ຄຳແນະນຳເພີ່ມເຕີມຂໍ້ຕົກລົງວ່າດ້ວຍການຈັດຊັ້ນໜີ້ ແລະ ຫັກເງິນແຮສຳລັບໜີ້ທີ່ຖືກຈັດຊັ້ນຂອງທະນາຄານທຸລະກິດ ສະບັບເລກທີ 324/ທຫລ; **(11)** ຄົ້ນຄວ້າການສ້າງນິຕິກຳສະເພາະ ສຳລັບການໃຫ້ບໍລິການຈັດອັນດັບຄວາມໜ້າເຊື່ອຖື ຂອງບໍລິສັດຈັດອັນດັບຄວາມໜ້າເຊື່ອຖືຂອງຕ່າງປະເທດ; **(12)** ອອກລະບຽບເພື່ອຮັບຮອງການນຳໃຊ້ ບັນຊີທີ່ບໍ່ປະສົງອອກນາມ ຂອງຜູ້ໄດ້ຮັບຜົນປະໂຫຍດສຸດທ້າຍ (Omnibus Account);

- ສືບຕໍ່ຄົ້ນຄວ້າການສະເໜີຂໍອະນຸຍາດສ້າງທະນາຄານ ກຸງເທບ ຈຳກັດ (ມະຫາຊົນ) ສາຂາຈຳປາສັກ; ທະນາຄານເອສທີ ສາຂາບໍ່ແກ້ວ ແລະ ສືບຕໍ່ຄົ້ນຄວ້າ ແລະ ຕິດຕາມການປະກອບເອກະສານເພີ່ມເຕີມກ່ຽວກັບການຍົກລະດັບ ຈາກສາຂາທະນາຄານທຸລະກິດຕ່າງປະເທດ ມາເປັນທະນາຄານທຸລະກິດເຕັມຮູບແບບ 4 ແຫ່ງ;
- ວຽກງານຕ້ານ ແລະ ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ: **(1)** ສືບຕໍ່ປັບປຸງຮ່າງກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (AML/CFT) ຮ່ວມກັບສະພາແຫ່ງຊາດ; **(2)** ສືບຕໍ່ເຊັນບົດບັນທຶກຄວາມເຂົ້າໃຈໃນການແລກປ່ຽນຂໍ້ມູນຂ່າວສານທີ່ຕິດພັນກັບວຽກງານ AML/CFT ກັບໜ່ວຍງານຂໍ້ມູນຕ້ານການຟອກເງິນ ປະເທດກຳປູເຈຍ; **(3)** ສືບຕໍ່ຄົ້ນຄວ້າ ແລະ ສັງລວມລາຍງານທຸລະກຳທີ່ມີລັກສະນະພາໃຫ້ສົງໄສວ່າເປັນການຟອກເງິນຈາກທະນາຄານທຸລະກິດ ເພື່ອເຮັດການວິເຄາະ ແລະ ລາຍງານຂັ້ນເທິງ ແລະ ລາຍງານເຈົ້າໜ້າທີ່ສືບສວນສອບສວນ ເພື່ອກຳນົດຮູບແບບກ່ຽວກັບການຟອກເງິນໃນ ສປປ ລາວ;
- ສືບຕໍ່ສັງລວມບັນດານິຕິກຳຂອງ ທຫລ ເພື່ອສົ່ງໃຫ້ກະຊວງຍຸຕິທຳ ລົງຈົດໝາຍເຫດທາງລັດຖະການ;
- ສືບຕໍ່ພັດທະນາ ໂມດູນ Forward Contract ໃນ Interbank; ທົດສອບໂປຣແກຣມ ການເຄື່ອນໄຫວບັນຊີ;
- ສືບຕໍ່ຄົ້ນຄວ້າມາດຖານບັນຊີສາກົນ IAS 34 “ຂໍ້ມູນຂ່າວສານລາຍງານການເງິນ” IAS 37 “ເງິນແຮໜີ້ສິນທີ່ອາດຈະເກີດຂຶ້ນ ແລະ ຊັບສິນທີ່ອາດຈະເກີດຂຶ້ນ”;
- ສືບຕໍ່ຈັດຕັ້ງປະຕິບັດວຽກງານການແຈ້ງຊັບສິນ ແລະ ລາຍຮັບຂອງພະນັກງານທະນາຄານ;
- ສືບຕໍ່ປັບປຸງຮ່າງແຜນຍຸດທະສາດການພັດທະນາຂະແໜງທະນາຄານຂອງ ສປປ ລາວ 2016-2025 ແລະ ວິໄສທັດຮອດປີ 2030;
- ສືບຕໍ່ເສີມຂະຫຍາຍສາຍພົວພັນຮ່ວມມືກັບສາກົນຜ່ານການຮ່ວມມືສອງຝ່າຍ, ຫຼາຍຝ່າຍ ແລະ ຮ່ວມມືກັບຂົງເຂດພາກພື້ນຢ່າງກວ້າງຂວາງ ແລະ ຮອບດ້ານ;
- ສືບຕໍ່ປະຕິບັດວຽກງານຂາຍສິດນຳໃຊ້ທີ່ດິນສອງຟາກທາງຖະໜົນວຽງຈັນ 450 ປີ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສປປ ລາວ
ຜູ້ວ່າການ

ດຣ. ສອນພາວ ໄຟສິດ

# ຕາຕະລາງຄັດຕິດບົດລາຍງານ

## ຕາຕະລາງ ທີ 1: ສະພາບອັດຕາແລກປ່ຽນພາຍໃນ

| ອັດຕາ | ເດືອນຜ່ານມາ 9/2014 | | | ເດືອນນີ້ 10/2014 | | | % (+) ເງິນກີບແຂງ / (-) ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| +ໃນລະບົບ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ໂດລາ | 8.027,43 | 8.059,68 | 8.041,27 | 8.029,92 | 8.061,74 | 8.043,21 | -0,03% | -0,03% | -0,02% |
| ບາດ | 251,72 | 252,89 | 252,50 | 249,04 | 250,24 | 249,85 | 1,08% | 1,06% | 1,06% |
| +ນອກລະບົບ | | | | | | | | | |
| ໂດລາ | 8.035,68 | 8.076,63 | 8.056,10 | 8.034,90 | 8.074,51 | 8.054,71 | 0,01% | 0,03% | 0,02% |
| ບາດ | 252,11 | 253,18 | 252,70 | 250,50 | 251,98 | 251,24 | 0,64% | 0,48% | 0,58% |
| ຜິດດ່ຽງອັດຕາໃນລະບົບ ແລະນອກລະບົບ (%) | | | | | | | | | |
| -ໂດລາ | 0,10% | 0,21% | 0,18% | 0,06% | 0,16% | 0,14% | | | |
| -ບາດ | 0,15% | 0,12% | 0,08% | 0,59% | 0,70% | 0,56% | | | |

## ຕາຕະລາງ ທີ 2: ສະພາບການຊື້-ຂາຍເງິນຕາຕ່າງປະເທດ

| | ເດືອນ 09/2014 | | ເດືອນ 10/2014 | | (%) +ເພີ່ມຂຶ້ນ / -ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 73,72 | 766,85 | 77,60 | 517,50 | 5,26% | -32,52% |
| - ທ/ຄທຸລະກິດອື່ນໆ | 98,75 | 654,03 | 113,21 | 719,28 | 14,65% | 9,98% |
| ລວມຊື້: | 172,46 | 1.420,88 | 190,81 | 1.236,78 | 10,64% | -12,96% |
| 2. ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 66,77 | 1.114,76 | 60,76 | 910,32 | -8,99% | -18,34% |
| - ທ/ຄທຸລະກິດອື່ນໆ | 70,53 | 2.173,05 | 120,13 | 2.136,86 | 70,33% | -1,67% |
| ລວມຂາຍ: | 137,30 | 3.287,81 | 180,90 | 3.047,18 | 31,75% | -7,32% |
| ທທກຊື້-ຂາຍສຸດທິ | 35,16 | -1.866,93 | 9,91 | -1.810,40 | -71,82% | -3,03% |
| % ຜິດດ່ຽງຊື້-ຂາຍ | 20,39 | -131,39 | 5,19 | -146,38 | -151,62% | -149,76% |
| ມູນຄ່າການຊື້-ຂາຍ | 309,76 | 4.708,69 | 371,70 | 4.283,96 | 20,00% | -9,02% |
| 3. ຊື້-ຂາຍລະຫວ່າງ ທຫລກັບ ທທກ | | | | | | |
| - ທຫລຊື້ຈາກທທກ | 7,90 | 0,00 | 14,36 | 0,00 | 81,78% | 0,00 |
| - ທຫລຂາຍໃຫ້ທທກ | 8,78 | 915,30 | 23,47 | 1.540,50 | 167,22% | 68,30% |
| ທຫລຊື້-ຂາຍສຸດທິ | -0,88 | -915,30 | -9,11 | -1.540,50 | 932,49% | 68,30% |
| 4. ຊື້-ຂາຍລະຫວ່າງທທກດ້ວຍກັນ | 32,55 | 537,67 | 54,03 | 427,43 | 65,99% | -20,50% |
| 5. ຊື້-ຂາຍລະຫວ່າງທຫລກັບພາກສ່ວນອື່ນ (ກະຊວງການເງິນ ແລະ ຮ້ານແລກປ່ຽນເງິນຕາ) | | | | | | |
| - ທຫລຊື້ຈາກພາກສ່ວນອື່ນ | 2,25 | 0,87 | 282,52 | 1,22 | 124,82% | 40,19% |
| - ທຫລຂາຍໃຫ້ພາກສ່ວນອື່ນ | 0,22 | 0,00 | 0,23 | 18,00 | 4,38% | 0,00 |
| ທຫລຊື້-ຂາຍສຸດທິ | 2,03 | 0,87 | 282,29 | -16,78 | 138,27% | -202,59% |